ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານແຫ່ງ ສປປ ລາວ ອວຍພອນເອກອັກຄະລັດຖະທູດ ສສ. ຫວຽດນາມ ປະຈຳ ສປປ ລາວ



ຕອນບ່າຍຂອງວັນທີ 18 ມັງກອນ 2023 ທີ່ສະຖານທູດ ສສ. ຫວຽດນາມ ປະຈຳ ສປປ ລາວ, ຕາງໜ້າທະນາຄານແຫ່ງ ສປປ ລາວ ນຳໂດຍທ່ານ ນ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະໄດ້ເຂົ້າຢ້ຽມຢາມ ໂອ້ລົມ ແລະ ພົບປະກັບ ທ່ານ Nguyễn Bá Hùng ເອກອັກຄະລັດຖະທູດຜູ້ມີອຳນາດເຕັມແຫ່ງ ສສ. ຫວຽດນາມ ປະຈຳ ສປປ ລາວ ເພື່ອອວຍພອນບຸນປີໃໝ່ປະເພນີຂອງ ສສ ຫວຽດນາມ, ພ້ອມນີ້ ທ່ານຮອງຜູ້ວ່າການ ກໍ່ໄດ້ຖືໂອກາດນີ້ອວຍພອນໄຊອັນປະເສີດເຖິງການນຳພັກ-ລັດ ຫວຽດນາມ ບັນລຸຜົນສຳເລັດດ້ານໜ້າທີ່ການເມືອງ, ອວຍພອນສາຍພົວພັນມິດຕະພາບທີ່ເປັນມູນເຊື້ອນ້ຳໃຈສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ, ຫວຽດນາມ-ລາວ ຍືນຍົງຄົງຕົວຕະຫຼອດການ.

ການພົບປະໃນຄັ້ງນີ້, ທັງສອງຝ່າຍກໍ່ໄດ້ແລກປ່ຽນຄຳຄິດຄຳເຫັນການຮ່ວມມືຮອບດ້ານ ກ່ຽວກັບວຽກເສດຖະກິດສັງຄົມ ໂດຍສະເພາະ, ແມ່ນການພັດທະນາວຽກງານໃນຂະແໜງການເງິນ-ເງິນຕາ ຂອງສອງຊາດລາວ-ຫວຽດນາມ ໃຫ້ນັບມື້ເຂັ້ມແຂງຂຶ້ນເລື້ອຍໆ.

ຂ່າວ-ພາບໂດຍ: ນ ທິດສະບາ ທຳມະວົງສິງ

*ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*